# ບົດຮຽນໂຮງຮຽນວັນອາທິດ
## ວັນອາທິດທີ 25 ເມສາ 2010 (4-25-2010)

## <u>ມີການສນັບສນຸນອັນຖືກຕ້ອງ</u>

**<u>ຂໍ້ພຣະຄັມພີໃນບົດຮຽນນີ້:</u>** 2 ໂກຣິນໂທ 8:8-15; 9:6-11

**<u>ຄໍາຖາມຊີວິດ:</u>** ບົດຮຽນນີ້ຈະຊ່ອຍໜຸນໃຈທ່ານໃຫ້ຖວາຍຊັບເພື່ອສນັບສນຸນວຽກງານການຮັບໃຊ້ພຣະຄຣິດ ໃນຄຣິສຕະຈັກຂອງທ່ານ

**<u>ພຣະຄັມພີແຫ່ງຄວາມຈິງ:</u>** ບົດຮຽນນີ້ເວົ້າເຖິງການຖວາຍເງິນເພື່ອການຮັບໃຊ້ໃນຄຣິສຕະຈັກຂອງທ່ານ.

**<u>ຜົນສະທ້ອນຕໍ່ຊີວິດ:</u>** ການຮັບໃຊ້ຈໍາເປັນຕ້ອງໃຊ້ເງິນ. ຈະເຫັນວ່າມີສະມາຊິກຫລາຍຄົນທີ່ມີລາຍໄດ້ຫຼາຍແຕ່ຖວາຍພຽງເລັກນ້ອຍຕາມມີຕາມເກີດເພື່ອວຽກງານການຮັບໃຊ້ນີ້ ແລະມີອີກຫລາຍໆຄົນບໍ່ຍອມຖວາຍເລີຍ. ບົດຮຽນນີ້ຈະທ້າທາຍໃຫ້ຜູ້ທີ່ເຊື່ອຖວາຍເງິນດ້ວຍໃຈກວ້າງຂວາງ, ດ້ວຍຄວາມຍິນດີເພື່ອການຮັບໃຊ້

ມີແມ່ເຖົ້າຄົນນຶ່ງໄດ້ຕາຍໃນເຮືອນຊັ້ນລຸ່ມ. ອາຈານແລະສະມາຊິກໃນໂບດທີ່ແມ່ເຖົ້າຄົນນັ້ນເປັນສະມາຊິກໄດ້ຊອກຫາເພາະບໍ່ເຫັນລາວໄປໂບດ. ພວກເຂົາໄດ້ພາກັນເຄາະປະຕູແຕ່ບໍ່ມີສຽງອັນໃດ ໃນທີ່ສຸດພວກເຂົາເຈົ້າເລີຍມ້າງປະຕູເຂົ້າໄປເລີຍພົບເຫັນແມ່ຕູ້ຄົນນັ້ນຕາຍ ມີປຶ້ມພຣະຄັມພີເປີດຢູ່, ມີເງິນຖວາຍຢູ່ໃນຊອງຕຽມໄວ້ລ່ວງໜ້າສາມອາທິດ. ສິ່ງນີ້ເປັນສັນຍາລັກວ່າແມ່ຕູ້ຄົນນີ້ມີຄວາມເຊື່ອທີ່ເຂັ້ມແຂງດີ ແລະໃຫ້ການສນັບສນຸນວຽກງານການຮັບໃຊ້ໃນຄຣິສຕະຈັກຂອງລາວ.

ອົງການຜລິດບົດຮຽນໂຮງຮຽນວັນອາທິດໄດ້ສໍາພາດຜູ້ຊາຍສະກັນໃນປະເທດອະເມຣິກາຜູ້ເປັນສະມາຊິກຂອງໂບດຄະນະໂປເຕັສແຕັນ ທີ່ໄປນະມັສການຢ່າງໜ້ອຍເດືອນລະເທື່ອ, 53% ກ່າວວ່າພວກເຂົາຖວາຍ 10 ລົດ(10%)ຕໍ່ອົງການຊ່ອຍເຫລືອຄົນຍາກຈົນແລະຄຣິສຕະຈັກຕ່າງໆ. ໃນບົດຮຽນນີ້ທ່ານຈະເຫັນເຫດຜົນສາມຢ່າງທີ່ສະມາຊິກຄວນຖວາຍຕໍ່ຄຣິສຕະຈັກຂອງຕົນ.

1. **<u>ການຖວາຍເປັນການສະແດງເຖິງຄວາມສັດຊື່:</u>** ( 2 ໂກຣິນໂທ 8:8-11 )

**ອາຈານໂປໂລເອົາຂອງຖວາຍໄປຊ່ອຍຄຣິສຕະຈັກກຸງເຢຣູຊາເລັມ**

ໃນຣະຫວ່າງກາງປີ ຄສ 50. ອາຈານໂປໂລໄດ້ຮັບໃຊ້ຫລາຍໆປີແລະກໍໄດ້ເກັບເງິນຖວາຍຈາກຄົນຕ່າງຊາດໄປຊ່ອຍຄຣິສຕະຈັກຢິວທີ່ກຸງເຢຣູຊາເລັມ (ໂຣມ 15:25-26). ເປັນຫຍັງຄຣິສຕະຈັກໃນກຸງເຢຣູຊາເລັມຈຶ່ງມີຄວາມຈໍາເປັນ? ກໍເພາະມີການອຶດຫິວເກີດຂຶ້ນ. ການແຫ້ງແລ້ງໄດ້ເກີດຂຶ້ນໃນເຂດອ້ອມກຸງເຢຣູຊາເລັມ (ປະມານປີ ຄສ. 46-48; ກຈກ 11:28). ແລະອາດແມ່ນການຖືກຂົ່ມເຫັງຈາກຢິວຜູ້ບໍ່ເຊື່ອ.

ແມ່ນຫຍັງກໍຕາມທີ່ເປັນເຫດໃຫ້ຄຣິສຕະຈັກໃນກຸງເຢຣູຊາເລັມມີຄວາມຕ້ອງການ. ອາຈານໂປໂລມີເຫດຜົນຢ່າງໜ້ອຍສອງຢ່າງທີ່ຈໍາເປັນຕ້ອງແຜ່ເງິນຈາກຄຣິສຕະຈັກຄົນຕ່າງຊາດ. 1) ເພິ່ນຕ້ອງການຊ່ອຍ

ເຫລືອຄົນທຸກຍາກ (2 ກຣທ 8:14; ຄລຕ 2:10). 2) ເພິ່ນຕ້ອງການສະແດງເຖິງການເປັນນໍ້ານຶ່ງໃຈດຽວກັນ ຣະຫວ່າງຄົນຕ່າງຊາດແລະພວກຢິວໃນອົງພຣະຄຣິດ. ໃນເມື່ອພວກຕ່າງຊາດຍອມສິ່ງປັດຈັຍ ແລະຊາວຢິວຍອມຮັບເອົາກໍໝາຍຄວາມວ່າກໍາແພງແຫ່ງການແບ່ງຊັ້ນວັນນະໄດ້ຖືກທໍາລາຍ. (ອຟຊ 2:14). ຊາວຢິວກໍສັຣເສີນພຣະເຈົ້າຕໍ່ພຣະຄຸນທີ່ພຣະເຈົ້າໄດ້ມີຄວາມເມດຕາຕໍ່ພວກຕ່າງຊາດ (2 ກຣທ 9:11-14).

ຄວາມຍິນດີອັນໃຫຍ່ຫລວງຊຶ່ງສິດຍາພິບານໄດ້ຮັບແມ່ນການສອນຄົນເຊື່ອໃໝ່ໃຫ້ຖວາຍຕົວແລະສິ່ງຂອງຕໍ່ການຮັບໃຊ້ໃນຄຣິສຕະຈັກ. ອາຈານໂປໂລໄດ້ສອນຄຣິສຕະຈັກໃນເມືອງໂກຣິນໂທໃຫ້ຮູ້ເຖິງການຖວາຍ ແລະເພິ່ນເນັ້ນວ່າຄໍາສອນນີ້**ບໍ່ແມ່ນຄໍາສັ່ງ**-ຄວາມຮັກແລະຈິດໃຈອັນກວ້າງຂວາງນັ້ນບໍ່ສາມາດຈະບັບຄັບໄດ້. ອາຈານໂປໂລໄດ້ກ່າວວ່າ, **ເຮົາກໍາລັງທົດລອງເບິ່ງຄວາມຮັກອັນແທ້ຈິງຂອງທ່ານ.** ການມີຄວາມຍິນດີແມ່ນເຮັດເໝືອນຄຣິສຕະຈັກເມືອງມັກເກໂດເນັຽໄດ້ເຮັດ. (8:1-7). ການທີ່ໃຫ້ນີ້ ເປັນສັນຍາລັກຂອງຄຣິສະຕຽນໃນເມືອງໂກຣິນໂທທີ່ມີຄວາມຮັກແທ້ເໝືອນກັບຄຣິສຕຽນທີ່ເມືອງມັກເກໂດເນັຽ.

**ພຣະຄຸນຂອງອົງພຣະເຢຊູຄຣິດ**ເປັນຕົວຢ່າງທີ່ດີເຖິງເຣື່ອງການຖວາຍ. **ພຣະຄຸນ**ແມ່ນການຊົງປະທານໃຫ້ດ້ວຍຄວາມຮັກຕໍ່ຜູ້ທີ່ບໍ່ສົມຄວນຈະໄດ້ຮັບ. ພຣະເຢຊູຄຣິດ**ຮັ່ງມີ**-ໝາຍເຖິງການເປັນຢູ່ຂອງອົງພຣະເຢຊູຕລອດກາລະນານ ເວລາພຣະອົງຊົງຮັ່ງມີ ມີອໍານາດ ແລະຕໍາແໜ່ງສູງ (ຟລປ 2:6). **ຍ້ອນພວກທ່ານທັງຫລາຍ ເຮົາ**ພຣະເຢຊູກາຍເປັນ**ຄົນທຸກຈົນ.** ໝາຍເຖິງເວລາອົງພຣະເຢຊູບັງເກີດເປັນມະນຸດ ເພາະພຣະອົງຍອມຖິ້ມເມືອງຟ້າສວັນ. ເປັນດ້ວຍເຫດໃດພຣະອົງຈຶ່ງເຮັດດັ່ງນີ້? **ເພາະດ້ວຍຄວາມທຸກຍາກຂອງພຣະອົງເຮົາຈຶ່ງກາຍເປັນຄົນຮັ່ງມີ**. ເວລາພວກເຮົາໄດ້ໄວ້ວາງໃຈໃນພຣະຄຣິດພວກເຮົາກໍມີສ່ວນໃນຄວາມຮັ່ງມີຕໍ່ຄວາມພົ້ນ "ເຮົາເປັນຜູ້ຮັບມໍຣະດົກດ້ວຍກັບພຣະອົງ" (ໂຣມ 8:17)

ອາຈານໂປໂລບໍ່ໄດ້ອອກຄໍາສັ່ງແຕ່ອອກຄວາມເຫັນເຖິງເຣື່ອງທີ່ຄຣິສຕະຈັກໃນເມືອງໂກຣິນໂທຄວນມີພາກສ່ວນສິ່ງປັດຈັຍໄປຊ່ວຍ. ຄຣິສຕຽນໃນເມືອງນີ້ເລີ້ມຕົ້ນມີຄວາມສົນໃຈຈະເຮັດບາງຢ່າງ ແຕ່ພວກເຂົາຍັງບໍ່ທັນໄດ້ເຮັດດັ່ງຄວາມຕັ້ງໃຈເອົາໄວ້. ອາຈານໂປໂລຈຶ່ງໜຸນໃຈພວກເຂົາໃຫ້ເຮັດຕາມຄວາມຕັ້ງໃຈເອົາໄວ້ນັ້ນໃຫ້ກາຍເປັນຈິງ ຈົນສໍາເຣັດ. ການຖວາຍຊັບຂອງພວກເຮົາເປັນສິ່ງວັດແທກການຖວາຍຕົວຂອງເຮົາຕໍ່ອົງພຣະຄຣິດ.

2. <u>**ການຖວາຍໄດ້ຊ່ວຍເຫຼືອຄົນອື່ນ**</u>**:** ( 2 ໂກຣິນໂທ 8:12-15)

ອັນໃດເປັນເຣື່ອງສໍາຄັນກັບການຖວາຍຂອງຄຣິສຕຽນ? ພຣະເຈົ້າເປັນຫ່ວງເຖິງສັດທາກັບການຖວາຍດ້ວຍຄວາມຍິນດີ. ພຣະເຈົ້າຕ້ອງປະສົງຢາກໃຫ້ຄົນຖວາຍຕາມສິ່ງຂອງທີ່ຕົນມີ (ມາຣະໂກ 12:41-44). ບໍ່ແມ່ນສິ່ງທີ່ຕົນເອງບໍ່ມີ. ກ່ອນນີ້ອາຈານໂປໂລໄດ້ຊັກຊວນໃຫ້ຄົນຜູ້ທີ່ເຊື່ອຖວາຍ "ເພື່ອຕົນເອງຈະມີເພີ້ມຂຶ້ນ" (1 ກຣທ 16:2).

ທຸກຄົນສເມີກັນໃນຄຣິສຕະຈັກ. ແຕ່ເຫັນວ່າບາງຄົນກໍມີຫລາຍເຫຼືອລົ້ນ ແລະອີກບາງຄົນກໍຍັງຂາດເຂີນ. ຕາມທີ່ພຣະເຈົ້າໄດ້ອວຍພຣະພອນແກ່ເຮົາ ພວກເຮົາກໍປະກາດຕໍ່ຄົນຍາກຈົນໂດຍຖວາຍຊັບສິນໃຫ້ຄຣິສຕະຈັກທີ່ເຮົາເປັນສະມາຊິກ. ອາຈານໂປໂລໄດ້ຮ້ອງຂໍໃຫ້ຄຣິສະຕຽນໃນເມືອງໂກຣິນໂທຖວາຍເພື່ອຄຣິສຕະຈັກຈະສາມາດຊ່ອຍຄົນທຸກຍາກອື່ນໆໄດ້. ການທີ່ອາຈານໂປໂລຮ້ອງຂໍນັ້ນເປັນການສະແດງເຖິງພຣະຄຸນຂອງພຣະເຈົ້າຊຶ່ງໄດ້ກະທໍາກິຈການໃນຊີວິດຂອງຜູ້ເຊື່ອ. ອາຈານໂປໂລໄດ້ຍົກເອົາຫລັກການ

ທີ່ວ່າທຸກຄົນສເມີກັນໃນພຣະກາຍຄຶດຣິສຕະຈັກມາເປັນຕົວຢ່າງເພື່ອຊັກຊວນໃຫ້ຄຣິສະຕຽນໃນເມືອງໂກຣິນໂທພາກັນປະຕິບັດ.

ຕົວຢ່າງການປະທານມານາຈາກສວັນ (ອົບພະຍົບ 16:18) ຜູ້ທີ່ທ້ອນໂຮມມານາໄວ້ຫລາຍກໍບໍ່ມີເຫຼືອໄວ້ ແລະຜູ້ເກັບມານາໄວ້ໜ້ອຍດຽວກໍບໍ່ອຶດຢາກ. ຫລັກການທີ່ວ່າທຸກຄົນສເມີກັນແມ່ນເປັນຄວາມຈິງ ບໍ່ມີຜູ້ໃດມີເຫລືອ ແລະບໍ່ມີຜູ້ໃດຂາດເຂີນ.

3. <u>**ການຖວາຍເປັນຜົນກໍາໄລແກ່ຜູ້ຖວາຍ:**</u> ( 2 ໂກຣິນໂທ 9:6-11 )

ຂ້າພະເຈົ້າໄດ້ຍິນນັກທຸຣະກິດຜູ້ເປັນຄຣິສະຕຽນກ່າວວ່າລາວໄດ້ຮັບ "ສອງທາງ" ຈາກເງິນຂອງລາວ: <u>ນຶ່ງ</u> ເວລາລາວຫາເງິນໄດ້; <u>ສອງ</u> ເວລາລາວເອົາໃຫ້ຄົນອື່ນ. ການໃຫ້ນັ້ນເປັນຜົນປໂຍດແກ່ຜູ້ໃຫ້. ອາຈານໂປໂລໄດ້ອະທິບາຍເຖິງຫລັກການຖວາຍວ່າ ຖ້າຄົນໃດຫວ່ານໜ້ອຍກໍໄດ້ເກັບກ່ຽວໜ້ອຍ, ແຕ່ໃນເມື່ອຄົນໃດຫວ່ານຫລາຍກໍໄດ້ຜົນຫລາຍຕາມສົມຄວນ. ຖ້ອຍຄໍານີ້ມີຄວາມໝາຍທັງທາງທັມມະຊາດແລະທາງດ້ານຄວາມເຊື່ອນໍາ. ບັນຫາຂອງພວກເຮົາທຸກວັນນີ້ແມ່ນພວກເຮົາໄດ້ຮັບພຣະພອນກໍເພາະພວກເຮົາໄດ້ຖວາຍ ເວລາເຮົາບໍ່ຖວາຍເຮົາກໍບໍ່ໄດ້ຮັບພຣະພອນ.

### ຜົນກໍາໄລ 5 ຢ່າງທີ່ຜູ້ຖວາຍໄດ້ຮັບ

- ການຖວາຍເຮັດໃຫ້ພວກເຮົາຄ້າຍຄືກັບພຣະເຈົ້າ
- ການຖວາຍໄດ້ຊ່ວຍຄົນອື່ນທີ່ຍາກຈົນ
- ------------------------------------------------------------------------
- ------------------------------------------------------------------------
- ------------------------------------------------------------------------

ພວກເຮົາເອົາຄວາມເວົ້າວ່າ ***ສນຸກ*** ມາຈາກອາຈານໂປໂລ ແປວ່າ ***ຊື່ນໃຈ*** -ການຖວາຍໃນຄຣິສຕະຈັກຄວນຈະເປັນເວລາທີ່ມີຄວາມຊົມຊື່ນຍິນດີອັນຍິ່ງໃຫຍ່.

ການມີນໍ້າໃຈຢາກຊ່ອຍຄົນອື່ນນັ້ນເປັນສິ່ງຄໍາຄັນກວ່າຈໍານວນທີ່ເອົາໃຫ້. ຜູ້ທີ່ຕັດສິນໃຈເຖິງຈໍານວນທີ່ຈະຖວາຍໃນໃຈກ່ອນນັ້ນກໍເປັນຜູ້ຖວາຍດ້ວຍຄວາມຍິນດີ ນັ້ນເປັນສິ່ງພຣະເຈົ້າຊອບພຣະທັຍ ແລະພຣະອົງຈະຊົງອວຍພຣະພອນ, ແຕ່ກົງກັນຂ້າມກັບຄົນທີ່ຖວາຍດ້ວຍຈິດໃຈຂົມຂື່ນ. ມັນເປັນຄວາມຈິງພວກເຮົາໃຊ້ຄໍາເວົ້າ**ສນຸກ**ຕາມອາຈານໂປໂລສອນຕອນນີ້ນັ້ນ ແມ່ນເພິ່ນເວົ້າເຖິງຄວາມຍິນດີ-ໃນເມື່ອພວກເຮົາຖວາຍໃນຄຣິສຕະຈັກໃນວັນອາທິດ ພວກເຮົາຄວນຖວາຍດ້ວຍຄວາມຍິນດີອັນໃຫຍ່ ໃຫ້ຖືວ່າເປັນກຽດພິເສດ.

ຂໍ້ 8 ເປັນຂໍ້ທີ່ເຕັມໄປດ້ວຍຄໍາສັນຍາທີ່ງົດງາມຂອງຜູ້ມີຈິດໃຈຢາກຖວາຍ. ຄົນເຮົາຢາກມີທຸກສິ່ງທຸກຢ່າງຕາມຄວາມຕ້ອງການກ່ອນທີ່ຈະຖວາຍໄດ້ເຕັມ, ແຕ່ກໍເຫັນວ່າພຣະເຈົ້າເປັນຜູ້ປະທານພຣະຄຸນອັນລົ້ນເຫລືອໃຫ້ແກ່ທ່ານ. ໃນເມື່ອຜູ້ຖວາຍມີຈິດໃຈຍິນດີກັບການຖວາຍແລ້ວ, ພຣະຄຸນພຣະເຈົ້າກໍຖ້ວມລົ້ນໃນຊີວິດຈິນ

ບໍ່ຂາດອັນໃດແຕ່ລະວັນ. ໃຫ້ເຂົ້າໃຈເອົາໄວ້ວ່າພວກເຮົາຢູ່ໃຕ້ຟ້າສວັນທີ່ເຕັມໄປດ້ວຍພຣະພອນ ບໍ່ພຽງແຕ່ສໍາລັບພວກເຮົາເອງເທົ່ານັ້ນ ແຕ່ຍັງມີໃຊ້ເພື່ອເຮັດການດີທຸກຢ່າງ ເຊັ່ນການຊ່ວຍຄົນອະນາຖາເປັນຕົ້ນ.

ອາຈານໂປໂລໃຊ້ຄໍາສອນຈາກພຣະທັມເພງສັຣເສີນ ບົດ 112:9 ເຖິງການຖວາຍ-ຜູ້ທີ່ຊ່ອຍຄົນທຸກຍາກນັ້ນເປັນສິ່ງຊອບທັມ ແລະຈະເປັນທີ່ຊົງຈໍາຕລອດໄປ. ຜູ້ທີ່ໃຫ້ນັ້ນກໍກາຍເປັນຄົນຮັ່ງມີເພາະຈິດໃຈກວ້າງຂວາງ-ຖ້າເຮັດຢ່າງນັ້ນພວກເຮົາກໍກາຍເປັນຄົນໄດ້ຮັບພຣະພອນທັງດ້ານຮ່າງກາຍ, ຈິດໃຈ, ຄວາມນຶກຄິດ ແລະໃນຄວາມເຊື່ອ. ຜູ້ທີ່ໃຫ້ດ້ວຍຈິດໃຈກວ້າງຂວາງນັ້ນກໍເປັນຄົນຮູ້ເຖິງພຣະຄຸນຂອງພຣະເຈົ້າ ພວກເຂົາເຈົ້າສັຣເສີນແລະຂອບພຣະຄຸນຕໍ່ພຣະເຈົ້າສເມີ. ໃນເມື່ອຄົນອື່ນເຫັນພວກເຮົາເຮັດດັ່ງນັ້ນ, *"ເມື່ອເຂົາເຫັນການດີທີ່ພວກທ່ານເຮັດ ເຂົາຈະໄດ້ສັຣເສີນພຣະບິດາຂອງພວກທ່ານຜູ້ຊົງສະຖິດຢູ່ໃນສວັນ."* (ມັດທາຍ 5:16).

## ບົດຮຽນໃນຊີວິດ

ທ່ານເຄີຍໄດ້ຍິນຄົນເວົ້າຢ່າງນີ້ບໍ່? ໂບດນັ້ນມີແຕ່ບອກໃຫ້ຄົນຖວາຍແລ້ວຖວາຍອີກ. ຄົນໃດທີ່ຕໍ່ວ່າເຖິງການຖວາຍນັ້ນກໍບໍ່ໄດ້ປະສົບກັບຄວາມຍິນໃນການມີນໍ້າໃຈສັດທາ ແລະຍັງບໍ່ເຂົ້າໃຈໃນພາຣະກິດຂອງຄຣິສຕະຈັກອີກນໍາ. ຄຣິສຕະຈັກເປັນບ່ອນສາມັກຄີທັມແລະເປັນຫ່ວງເປັນໃຍຕໍ່ກັນແລະກັນ.

ຄຣິສຕະຈັກຂອງພຣະຄຣິດສົມຄວນຊ່ວຍເຫລືອສະມາຊິກແລະຄົນອື່ນໆ. ການຖວາຍຂອງພວກເຮົາເປັນການສະແດງເຖິງຄວາມສັມພັນຂອງເຮົາຕໍ່ອົງພຣະຄຣິດ. ການຖວາຍເຮັດໃຫ້ຊີວິດຂອງຜູ້ຖວາຍຮັ່ງມີ ແລະອູ້ມຊູພາຣະກິດຂອງຄຣິສຕະຈັກ. ໃນອາທິດນີ້ທ່ານຈະເອົາບົດຮຽນນີ້ມາໃຊ້ໃນຊີວິດຂອງທ່ານຢ່າງໃດ?

- ສໍາຣວດເບິ່ງການຖວາຍຂອງທ່ານ. ອະທິຖານຕໍ່ພຣະເຈົ້າໃຫ້ພຣະອົງອວຍພຣະພອນເພື່ອທ່ານຈະສາມາດເພີ້ມຈໍານວນຖວາຍຂຶ້ນ.
- ສັງເກດເບິ່ງສິ່ງແວດລ້ອມ ວ່າມີໃຜບໍ່ມີຄວາມຕ້ອງການແລະເພື່ອຈະຊ່ວຍພວກເຂົາ.
- ຈົ່ງຍິນດີຊ່ອຍເຫລືອຄົນນຶ່ງຄົນໃດໃນຄຣິສຕະຈັກຂອງທ່ານເມື່ອເຂົາເຈົ້າຂັດສົນ.
- ຖ້າພຣະເຈົ້າປະທານພຣະພອນໃຫ້ຫລາຍ ຂໍໃຫ້ທ່ານຊ່ວຍເຫລືອຕໍ່ອົງການປະກາດຕ່າງປະເທດ ແລະຊ່ວຍເຫລືອອົງການລ້ຽງຄົນອຶດອາຫານ.
- ຈົ່ງຈື່ຈໍາໄວ້ວ່າອົງພຣະເຢຊູໄດ້ສະລະບັງລັງໃນສວັນ ແລະກາຍເປັນຄົນທຸກຍາກເພື່ອພວກເຮົາ.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org.,by BV.**